ຄະນະກຳມາທິການເອີຣົບ
ຫົວໜ້າສະຫະພາບອາກອນ ແລະ ພາສີ

ນະໂຍບາຍພາສີ, ນິຕິກຳ, ອັດຕາພາສີ

ບຣຸກແຊນ, ວັນທີ 23 January 2017

# ຄູ່ມື [ຄຸ້ມຄອງ] ທຸລະກິດສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ

## ສາລະບານ


1 ພາກສະເໜີ ... 4

1.1 ຈຸດປະສົງ ... 4

1.2 ຂອບເຂດ ... 4

1.3 ກຸ່ມເປົ້າໝາຍ ... 4

1.4 ໂຄງສ້າງຂອງເອກະສານສະບັບນີ້ ... 5

1.5 ເອກະສານອ້າງອີງ ແລະ ເອກະສານທີ່ສາມາດນຳໃຊ້ໄດ້ ... 5

1.5.1 ເອກະສານອ້າງອີງ ... 5

1.5.2 ເອກະສານທີ່ສາມາດນຳໃຊ້ໄດ້ ... 6

1.6 ຕົວອັກສອນຫຍໍ້ ແລະ ຄຳຫຍໍ້ຊື່ ... 6

2 ການສະເໜີກ່ຽວກັບ REX ... 8

3 ຜູ້ມີສ່ວນກ່ຽວຂ້ອງ/ຄວາມຮັບຜິດຊອບຕໍ່ REX ... 10

3.1 ລັດສະມາຊິກ ... 10

3.2 ຜູ້ນຳໃຊ້ (COM) ຂອງຄະນະກຳມາທິການ ... 10

3.3 ຜູ້ບໍລິຫານພາຍໃນຂອງອົງການທີ່ມີສິດອຳນາດ (CA) ຂອງ BC ... 11

3.4 ຜູ້ນຳໃຊ້ພາຍໃນ CA ຂອງ BC ... 11

3.5 ຜູ້ສົ່ງອອກ/ຜູ້ເຄື່ອນໄຫວເສດຖະກິດ ... 12

3.6 ຜູ້ນຳໃຊ້ທົ່ວໄປ ... 13

4 ຂະບວນການດຳເນີນງານຂອງ REX ... 14

4.1 ຂະບວນການຂອງໂປຼແກຼມ REX ... 14

4.1.1 ກ່ອນໜ້າການຍື່ນຄຳຮ້ອງຂອງ REX ... 15

4.2 ການດັດແກ້ຂະບວນການຂໍ້ມູນຂອງ REX ... 16

4.3 ການຍົກເລີກຂະບວນການຂຶ້ນທະບຽນ REX ... 18

4.3.1 ການຍົກເລີກ REX ... 18

4.3.2 ການຍົກເລີກຜູ້ສົ່ງອອກທັງໝົດສະເພາະບາງປະເທດ .......................... 18
4.4 ການປະກາດການເປັນໂມຄະຂອງການຍົກເລີກຂະບວນການຂຶ້ນທະບຽນ REX..... 19
4.5 ເພີ່ມ/ ລວມຕົວຄືນໃໝ່/ ຖອນ/ ໂຈະ ຂະບວນການຂອງປະເທດ ....................... 21
4.6 ການນຳໃຊ້ REX ຢູ່ໃນການດຳເນີນການແຈ້ງພາສີ ....................................... 22
5 ລາຍລະອຽດຂອງລະບົບ REX ໃນລະດັບສູງ.......................................... 23
5.1 ລາຍລະອຽດຂອງລະບົບ REX ທົ່ວໄປ....................................................... 23
5.1.1 ໃຜມີສິດໄດ້ ເລກ REX?............................................................. 23
5.1.2 ອົງການທີ່ຮັບຜິດຊອບການຂຶ້ນທະບຽນ REX .................................... 23
5.1.3 ໂຄງສ້າງຂອງເລກ REX ............................................................... 23
5.1.4 ນຳໃຊ້ເລກ REX.......................................................................... 24
5.1.5 ເລກປະຈຳຕົວການຄ້າ ປຽບທຽບກັບ ເລກ REX ................................ 24
5.1.6 ຜົນປະໂຫຍດຂອງເລກ REX ......................................................... 25
5.2 ການພິມເຜີຍແຜ່/ການທາບທາມຄຳເຫັນ......................................................... 27
6 ເອກະສານຊ້ອນທ້າຍ ...................................................................... 28
6.1 ລາຍລະອຽດກ່ຽວກັບອົງການທີ່ມີສິດອຳນາດ .................................................. 28
6.2 ບ່ອນອີງທາງດ້ານກົດໝາຍ .......................................................................... 28
6.3 SLASLA ........................................................................................ 28
6.4 ວຽກງານສະໜັບສະໜູນ ............................................................................ 28
6.4.1 ໂຕະບໍລິການແຫ່ງຊາດ ແລະ ສູນກາງ ............................................. 28

## ຕາຕະລາງ

ຕາຕະລາງ1-1: ເອກະສານອ້າງອີງ ..................................................................... 6
ຕາຕະລາງ1-2: ເອກະສານທີ່ສາມາດນຳໃຊ້ໄດ້ .......................................................... 6
ຕາຕະລາງ1-3: Abbreviations ແລະAcronyms................................................... 7

## ລາຍການຮູບ

# 1 ພາກສະເໜີ

## 1.1 ຈຸດປະສົງ

ຈຸດປະສົງຕົ້ນຕໍຂອງເອກະສານສະບັບນີ້ ແມ່ນເພື່ອສ້າງຄໍາແນະສໍາລັບຜູ້ນໍາໃຊ້ຄູ່ມື REX ຊຶ່ງມີການກໍານົດແນວ ຄວາມຄິດກ່ຽວກັບການຢັ້ງຢືນດ້ວຍຕົນເອງ ໃນຂົງເຂດແຫຼ່ງກໍາເນີດທີ່ໄດ້ຮັບສິດທິພິເສດດ້ານ GSP ຕະຫຼອດ ຮອດຄໍາເຫັນກ່ຽວກັບການດໍາເນີນງານຂອງລະບົບ REX ແລະ ການເຮັດໜ້າທີ່ຂອງລະບົບດັ່ງກ່າວ.

ນອກນັ້ນ ຈະມີການເວົ້າເຖິງ ຕົວແບບຂອງຂະບວນການດໍາເນີນງານ REX (BPM) ທີ່ຖືກກໍານົດໄວ້ແລ້ວ ກ່ຽວກັບອົງການຂອງລັດສະມາຊິກ EU, ອົງການຂອງຄູ່ຮ່ວມປະສານງານ ແລະ ປະເທດທີ່ໄດ້ຮັບຜົນປະໂຫຍດ (BCs) ຈາກໂຄງການ GSP ຂອງສະຫະພາບເອີລົບ ເພື່ອສົ່ງເສີມຄວາມຮູ້ດ້ານທຸລະກິດຂອງຜູ້ອ່ານ.

## 1.2 ຂອບເຂດ

ຈຸດປະສົງຂອງເອກະສານສະບັບນີ້ ແມ່ນກໍານົດລາຍລະອຽດກ່ຽວກັບການດໍາເນີນງານທັງໝົດ ຊຶ່ງຈະເຮັດໃຫ້ ຜູ້ນໍາໃຊ້ ມີຄວາມຄຸ້ນເຄີຍກັບໜ້າທີ່ຂອງໂປຼແກຼມກ່ຽວກັບການນໍາໃຊ້ລະບົບ REX ແລະ ຄໍາເຫັນກ່ຽວກັບ ພາກປະຕິບັດຕົວຈິງ ຂອງໂຄງການຢັ້ງຢືນດ້ວຍຕົນເອງ ໃນຂົງເຂດແຫຼ່ງກໍາເນີດທີ່ໄດ້ຮັບສິດທິພິເສດຂອງ GSP.

## 1.3 ກຸ່ມເປົ້າໝາຍ

ເອກະສານສະບັບນີ້ ແນໃສ່ເຮັດໃຫ້ຜູ້ອ່ານທີ່ມີຄວາມຮູ້ໃນຂົງເຂດຕ່າງໆ ແລະ ມີບົດບາດດ້ານການປະຕິບັດງານ ຢູ່ໃນຂົງເຂດລະບົບທີ່ກ່ຽວຂ້ອງກັບ REX ແລະ ໃນຫຼັກການຂອງ GSP ກ່ຽວກັບຂົງເຂດແຫຼ່ງກໍາເນີດ. ກຸ່ມເປົ້າໝາຍ ປະກອບດ້ວຍ:

- ອົງການແຫ່ງຊາດທັງໝົດ ຊຶ່ງແມ່ນຜູ້ເຂົ້າຮ່ວມການຈັດຕັ້ງປະຕິບັດໂຄງການ REX ເປັນຕົ້ນອົງການທີ່ມີສິດອໍານາດທັງໝົດຂອງ BCs;
- ລັດສະມາຊິກ….
- ຜູ້ນໍາໃຊ້ພາຍໃນຂອງ BCs
- ການຮັບປະກັນຄຸນນະພາບ (QA3)
- ອົງການຂອງຄູ່ຮ່ວມປະສານງານ

## 1.4 ໂຄງສ້າງຂອງເອກະສານສະບັບນີ້

ບັນດາຫົວຂໍ້ທີ່ກຳນົດຢູ່ໃນເອກະສານສະບັບນີ້ມີ ດັ່ງນີ້:

- **ພາກທີ** Error! Reference source not found.: Error! Reference source not found.: ຈຸດປະສົງ, ຂອບເຂດ ແລະ ໂຄງສ້າງເອກະສານ;
- **ພາກທີ** 2: **ຄວາມຮູ້ເບື້ອງຕົ້ນກ່ຽວກັບ** REX:
- **ພາກທີ** 3: **ຜູ້ມີສ່ວນກ່ຽວຂ້ອງກັບ** RE/**ຄວາມຮັບຜິດຊອບກ່ຽວກັບ** REX:
- **ພາກທີ** 4: **ຂະບວນການດຳເນີນງານຂອງ** REX:
- **ພາກທີ** 5 :**ການນຳໃຊ້ລະບົບ** REX **ໃນລະດັບສູງ**:
- **ພາກທີ** 6: **ເອກະສານຊ້ອນທ້າຍ**:

## 1.5 ເອກະສານອ້າງອີງ ແລະ ເອກະສານທີ່ສາມາດນຳໃຊ້ໄດ້

### *1.5.1 ເອກະສານອ້າງອີງ*

| REF. | ຫົວຂໍ້ | ເອກະສານອ້າງອີງ | VERSION |
|---|---|---|---|
| R01 | REX Business Case | REX_Business_Case_v0p99p5_Clean_ext | 0.99.5 |
| R02 | ແຜນຍຸດທະສາດປະຈຳປີແບບຫຼາຍປີ ( MASP) 2014 | ແຜນຍຸດທະສາດປະຈຳປີແບບຫຼາຍປີ ( MASP) 2014 | 11 |
| R03 | ເງື່ອນໄຂຂອງຜູ້ນຳໃຊ້ REX | ເງື່ອນໄຂຂອງຜູ້ນຳໃຊ້ REX | 1.1 |
| R04 | ລະບຽບການຂອງຄະນະກຳມາທິການ (EEC) ເລກທີ 2454/93 ລົງວັນທີ 2 ກໍລະກົດ 1993 ທີ່ກຳນົດບົດບັນຍັດສຳລັບການຈັດຕັ້ງປະຕິບັດລະບຽບການຂອງສະພາ (EEC) ເລກທີ 2913/92 ວ່າດ້ວຍການສ້າງຕັ້ງລະຫັດພາສີຂອງປະຊາຄົມ (OJ L 253, 11.10.1993, p. 1) | ລະບຽບການຂອງຄະນະກຳມາທິການ (EEC) ເລກທີ 2454/93 ລົງວັນທີ 2 ກໍລະກົດ 1993 ທີ່ກຳນົດບົດບັນຍັດ ສຳລັບການຈັດຕັ້ງ ປະຕິບັດລະບຽບການ ຂອງສະພາ (EEC) ເລກທີ 2913/92 ວ່າດ້ວຍການສ້າງຕັ້ງ ລະຫັດພາສີຂອງ ປະຊາຄົມ (OJ L 253, 11.10.1993, p. 1) | 1.00 |
| R05 | ລະບຽບການຈັດຕັ້ງປະຕິບັດຂອງຄະນະກຳມາທິ ການ (EU) ເລກທີ 2015/428 ລົງວັນທີ 10 ມີນາ 2015 ວ່າດ້ວຍການປັບປຸງລະລຽບການ (EEC) ເລກທີ 2454/93 ແລະ ລະບຽບການ (EU) 1063/2010 | ລະບຽບການຈັດຕັ້ງປະຕິບັດຂອງຄະນະກຳມາທິ ການ (EU) ເລກທີ 2015/428 ລົງວັນທີ 10 ມີນາ 2015 ວ່າດ້ວຍການປັບປຸງລະລຽບ ການ (EEC) ເລກທີ 2454/93 ແລະ ລະບຽບການ (EU) 1063/2010 | 1.00 |

| | | | |
|---|---|---|---|
| R06 | ເອກະສານກ່ຽວກັບວິໄສທັດຂອງ REX | ເອກະສານກ່ຽວກັບວິໄສທັດຂອງ REX | 1.00 |
| R07 | CD3-REX-UseCase Models-SfA | CD3-REX-Use Case Models-SfA | 1.00 |
| R08 | ເງື່ອນໄຂຂອງ REX ກ່ຽວກັບການປະສານງານ | REX-ToC | 1.10 |
| R09 | CD3-REX-User Interface Specifications-SfA | CD3-REX-UIS-SfA | 1.00 |

**ຕາຕະລາງ 1-1: ເອກະສານອ້າງອີງ**

### *1.5.2 ເອກະສານທີ່ສາມາດນຳໃຊ້ໄດ້*

| REF. | TITLE | PUBLISHING ORGANISATION | VERSION | DATE |
|---|---|---|---|---|
| A01 | Framework Contract | TAXUD/2013/CC/124 | N/A | 11/11/2013 |
| A02 | Specific Contract n° 06 | TAXUD/2014/DE/135 | N/A | 20/08/2014 |

**ຕາຕະລາງ 1-2: ເອກະສານທີ່ສາມາດນຳໃຊ້ໄດ້**

## 1.6 ຕົວອັກສອນຫຍໍ້ ແລະ ຄຳຫຍໍ້ຊື່

| ຕົວອັກສອນຫຍໍ້/ຄຳຫຍໍ້ຊື່ | ຄຳອະທິບາຍ |
|---|---|
| AA | ສັນຍາດ້ານການບໍລິຫານ |
| AREX | ຄຳຮ້ອງຂໍເປັນຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ |
| BPM | ຕົວແບບຂະບວນການດຳເນີນງານ |
| BC | ປະເທດທີ່ໄດ້ຮັບຜົນປະໂຫຍດ |
| CCIP | ປັດບັນຍັດຈັດຕັ້ງປະຕິບັດລະຫັດອັດຕາພາສີ |
| COM | ຄະນະກຳມາທິການເອີລົບ |
| CP | ຄູ່ຮ່ວມມື |

| ຕົວອັກສອນຫຍໍ້/ຄໍາຫຍໍ້ຊື່ | ຄໍາອະທິບາຍ |
|---|---|
| DG TAXUD | ຫົວໜ້າສະຫະພາບອາກອນ ແລະ ພາສີ |
| DG TAXUD IT | ໜ່ວຍງານ IT ຂອງກົມຂອງສະຫະພາບສ່ວຍສາອາກອນ ແລະ ພາສີ |
| EC | ປະຊາຄົມເອີລົບ |
| ECCG | ກຸ່ມປະສານງານດ້ານພາສີທາງເອເລັກໂຕຣນິກ |
| EO | ຜູ້ດໍາເນີນເສດຖະກິດ |
| EORI | ທະບຽນ ແລະ ເລກປະຈໍາຕົວຜູ້ດໍາເນີນເສດຖະກິດ |
| FC | ຂອບສັນຍາ |
| GSP | ລະບົບການໃຫ້ສິດທິພິເສດທາງພາສີ |
| IA | ນິຕິກໍາຈັດຕັ້ງປະຕິບັດ |
| MASP | ແຜນຍຸດທະສາດປະຈໍາປີແບບມີຫຼາຍສະບັບ |
| MS | ລັດສະມາຊິກ |
| MSA | ອົງການຂອງລັດສະມາຊິກ |
| MoU | ບົດບັນທຶກຄວາມເຂົ້າໃຈ |
| NA | ອົງການແຫ່ງຊາດ |
| OCT | ປະເທດ ແລະ ອານາເຂດຕ່າງປະເທດ |
| QA | ການຮັບປະກັນຄຸນນະພາບ |
| REX | ລະບົບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ |
| SLA | ສັນຍາລະດັບບໍລິການ |
| SfA | ຍື່ນເພື່ອການຮັບຮອງ |
| SfR | ຍື່ນເພື່ອການທົບທວນ |
| TEMPO | ລະບົບການຄຸ້ມຄອງຄຸນນະພາບຂອງ DG TAXUD IT ( ການຄຸ້ມຄອງ TAXUD ແບບເອເລັກໂຕຣນິກຂອງ Projects On-Line) |
| ToC | ເງື່ອນໄຂການຮ່ວມມື |
| TIN | ເລກປະຈໍາຕົວຜູ້ສົ່ງອອກ |
| UCC | ລະຫັດພາສີຂອງສະຫະພັນ |
| UI | ຕົວເຊື່ອມປະສານກັບຜູ້ໃຊ້ |

**ຕາຕະລາງ 1-3: ຕົວອັກສອນຫຍໍ້ ແລະ ຄໍາຫຍໍ້ຊື່**

# 2 ການສະເໜີກ່ຽວກັບ REX

ໂຄງການລະບົບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ (REX) ແນໃສ່ຈັດຕັ້ງປະຕິບັດລະບົບ ເພື່ອເຮັດໃຫ້ຂໍ້ມູນ ກ່ຽວກັບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ທີ່ສ້າງຕັ້ງຢູ່ນອກປະເທດສະມາຊິກ EU (ປະເທດທີ່ໄດ້ປະໂຫຍດ ຈາກ GSP) ທີ່ສົ່ງອອກສິນຄ້າໄປ EU ພາຍໃຕ້ສັນຍາການຄ້າທີ່ໃຫ້ສິດທິພິເສດ ໄດ້ຮັບການປັບປຸງຢ່າງທັນ ເຫດການ ແລະ ຄົບຖ້ວນ ສ່ວນຜູ້ສົ່ງອອກທີ່ໄດ້ຮັບການສ້າງຕັ້ງພາຍໃຕ້ MS/CH/NO (ຖ້າຫາກໄດ້ຂຶ້ນທະບຽນ) ແມ່ນຈະຖືກລວມເຂົ້າໃນລະບົບສູນກາງຂອງ REX.

ນອກຈາກນັ້ນ, ມັນຈະກາຍເປັນລະບົບການຢັ້ງຢືນແບບໃໝ່ທີ່ຜູ້ສົ່ງອອກເຮັດດ້ວຍຕົນເອງ ຊຶ່ງມັນປ່ຽນແທນ ລະບົບການຢັ້ງຢືນແຫຼ່ງກຳເນີດທີ່ອອກໂດຍອົງການຈັດຕັ້ງລັດ ນັບແຕ່ ວັນທີ 1 ມັງກອນ 2017 ເປັນຕົ້ນໄປ. ນັບແຕ່ປີ 2017 ເປັນຕົ້ນໄປ ຜູ້ສົ່ງອອກຈະສະໜອງເອກະສານຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ລູກຄ້າໂດຍກົງ. ຜູ້ສົ່ງອອກ ຈະໄດ້ຮັບການຂຶ້ນທະບຽນຢູ່ນຳອົງການທີ່ມີສິດອຳນາດຂອງປະເທດທີ່ໄດ້ປະໂຫຍດ ແລະ ອົງການທີ່ກ່ຽວຂ້ອງຂອງ MS/CH/NO ເພື່ອອຳນວຍຄວາມສະດວກໃຫ້ແກ່ການຕິດຕາມກວດກາທີ່ນອນຢູ່ໃນເປົ້າໝາຍ ພາຍຫຼັງການສົ່ງ ອອກ.

ໃນເວລາຂຶ້ນທະບຽນ ຜູ້ສົ່ງອອກ, ອົງການທີ່ມີສິດອຳນາດຂອງປະເທດທີ່ໄດ້ປະໂຫຍດ ແລະ ອົງການທີ່ກ່ຽວຂ້ອງ ຂອງ MS/CH/NO ຈະອອກເລກປະຈຳຕົວ, ເລກ REX ໃຫ້ແກ່ຜູ້ສົ່ງອອກ. ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນ ທະບຽນຈະນຳໃຊ້ເລກ REX ຂອງຕົນໃສ່ໃນໃບແຈ້ງແຫຼ່ງກຳເນີດທີ່ຕົນຈະອອກ.

ປະເທດທີ່ໄດ້ປະໂຫຍດ ຊຶ່ງຍັງບໍ່ທັນພ້ອມທີ່ຈະນຳໃຊ້ລະບົບໃໝ່ສຳລັບການຢັ້ງຢືນດ້ວຍຕົນເອງ ໃນວັນທີ 1 ມັງກອນ 2017 ຈະຕ້ອງໄດ້ແຈ້ງ ຢ່າງຊ້າບໍ່ໃຫ້ກາຍ ວັນທີ 1 ກໍລະກົດ 2016 ວ່າຕົນຈະນຳໃຊ້ລະບົບດັ່ງກ່າວ ພາຍໃນ 1 ຫຼື 2 ປີ ຖັດຈາກນັ້ນ (ວັນທີ 1 ມັງກອນ 2018 ຫຼື ວັນທີ 1 ມັງກອນ 2019 ຕາມລຳດັບ).

ພາຍຫຼັງນຳໃຊ້ລະບົບ REX ແລະ ການນຳໃຊ້ລະບົບການຢັ້ງຢືນດ້ວຍຕົນເອງໃໝ່ ໂດຍປະເທດທີ່ໄດ້ປະໂຫຍດ, ແຕ່ວ່າ ລະບົບການຢັ້ງຢືນແຫຼ່ງກຳເນີດສິນຄ້າໃນປະຈຸບັນທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດ Form A ທີ່ອອກໂດຍ ອົງການທີ່ມີສິດອຳນາດ ຫຼື ການແຈ້ງໃບເກັບເງິນທີ່ຜູ້ສົ່ງອອກໄດ້ອອກໃຫ້ ຈະສືບຕໍ່ນຳໃຊ້ໄປຄຽງຄູ່ກັນ ເປັນໄລຍະ ເວລາສູງສຸດ 1,5 ປີສຳລັບຜູ້ສົ່ງອອກທີ່ຍັງບໍ່ຂຶ້ນທະບຽນເທື່ອ ເພື່ອຈຸດປະສົງໃນການສືບທອດ.

ເພື່ອຮັບປະກັນໃຫ້ REX ໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາ, ຜູ້ບໍລິຫານຂອງຄະນະກຳມາທິການເອີລົບ ຈະຕິດຕໍ່ຫາອົງການຂອງປະເທດທີ່ໄດ້ຮັບປະໂຫຍດທັນທີ ກ່ຽວກັບ ການຊີ້ນຳ ແລະ ການຊ່ວຍເຫຼືອປະເທດເຫຼົ່າ ນັ້ນໃນການຈັດຕັ້ງປະຕິບັດລະບົບ IT ທີ່ຈຳເປັນ. ແຕ່ລະປະເທດທີ່ໄດ້ຮັບປະໂຫຍດ ຈຳເປັນຕ້ອງມີການບັນທຶກ ແບບເອເລັກໂຕຣນິກກ່ຽວກັບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ຊຶ່ງເນື້ອໃນການບັນທຶກຈະຖືກສົ່ງໃຫ້ແກ່ ຄະນະ ກຳມາທິການເອີລົບ ໂດຍອົງການທີ່ມີສິດອຳນາດຂອງປະເທດທີ່ໄດ້ຮັບປະໂຫຍດ.

ຄະນະກຳມາທິການເອີລົບຈະສ້າງຖານຂໍ້ມູນລວມກ່ຽວກັບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ຊຶ່ງຜ່ານຖານຂໍ້ມູນ ດັ່ງກ່າວ ຈະເຮັດໃຫ້ຜູ້ສົ່ງອອກ ສາມາດກວດສອບ ກ່ອນຈະແຈ້ງໃຫ້ປ່ອຍສິນຄ້າອອກສູ່ຂອດຈໍລະຈອນ ວ່າຜູ້ສະ ໜອງຂອງຕົນ ແມ່ນ ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນຢູ່ປະເທດທີ່ໄດ້ຮັບປະໂຫຍດທີ່ກ່ຽວຂ້ອງ, ພ້ອມທັງ ການຕິດຕາມກວດກາທີ່ກ່ຽວຂ້ອງຈາກອົງການແຫ່ງຊາດຂອງ MS/CH/NO

# 3 ຜູ້ມີສ່ວນກ່ຽວຂ້ອງ/ຄວາມຮັບຜິດຊອບຕໍ່ REX

ຂອບເຂດທົ່ວຂໍ້ຄວາມຮັບຜິດຊອບຂອງຜູ້ກ່ຽວຂ້ອງກັບ REX ແມ່ນກຳນົດພື້ນຖານສຳລັບວິທີການທີ່ອະທິບາຍ ໃຫ້ຈະແຈ້ງຂຶ້ນຕື່ມກ່ຽວກັບການຈັດຕັ້ງປະຕິບັດ REX ແລະ ລະບຸວິທີຕິດຕໍ່ສື່ສານຂອງຜູ້ນຳໃຊ້ ຊຶ່ງເຮັດໃຫ້ມີ ຄວາມເຂົ້າໃຈກ່ຽວກັບໜ້າທີ່ຂອງລະບົບມີຄວາມສອດຄ່ອງຫຼາຍຂຶ້ນ.

ບັນຊີລາຍຊື່ຜູ້ມີສ່ວນກ່ຽວຂ້ອງຂອງ BCs ຕໍ່ໄປນີ້ ຈະກ່ຽວຂ້ອງກັບການນຳໃຊ້ລະບົບ. ນອກຈາກນັ້ນ, ກໍ່ມີການ ວິໄຈໂດຍຫຍໍ້ສຳລັບຂໍ້ມູນທີ່ກ່ຽວຂ້ອງກ່ຽວກັບຜູ້ນຳໃຊ້ (ຜູ້ບໍລິຫານ) ຂອງຄະນະກຳມາທິການ ເພື່ອເປັນຂໍ້ມູນ;

### 3.1 ລັດສະມາຊິກ

### 3.2 ຜູ້ນຳໃຊ້ (COM) ຂອງຄະນະກຳມາທິການ

ຜູ້ນຳໃຊ້ດັ່ງກ່າວນີ້ ໝາຍເຖິງ ຜູ້ນຳໃຊ້ຂອງຄະນະກຳມາທິການຂອງ EU. ຜູ້ນຳໃຊ້ COM ສາມາດເຂົ້າເຖິງລະບົບ REX ໂດຍຜ່ານ ECAS ແລະ ດຳເນີນຂັ້ນຕອນດ້ານບໍລິຫານຫຼາຍຢ່າງ ເປັນຕົ້ນ ການຄຸ້ມຄອງໂຄງການ GSP ຂອງ EU, ບົດບາດດ້ານການດຳເນີນງານຂອງ REX ແລະ ການສະຫຼຸບກ່ຽວກັບການປະຕິບັດງານ ແລະອື່ນໆ.

ຜູ້ນຳໃຊ້ COM ຍັງສາມາດນຳໃຊ້ຂໍ້ມູນ REX ແລະ ດຳເນີນຕາມຂັ້ນຕອນການບໍລິຫານ ເຊັ່ນ: ການຍົກເລີກ ການອະນຸມັດ REX ລະດັບບຸກຄົນ ຫຼື ລະດັບຊາດ (ເປັນຕົ້ນ ຍົກເລີກການອະນຸມັດ REX ສຳລັບຜູ້ສົ່ງອອກ ໃດໜຶ່ງ; ຍົກເລີກການອະນຸຍາດ REX ທັງໝົດສຳລັບປະເທດທີ່ໄດ້ຮັບ GSP ຂອງ EU ບາງປະເທດ).

ນອກຈາກນັ້ນ, ຜູ້ນຳໃຊ້ COM ຍັງຈະມີການເຂົ້າເຖິງຫຼັກຖານການກວດສອບໂປຼແກຼມ REX. ໂປຼແກຼມ REX ມີແບບຟອມການຊອກຫາຫຼັກຖານການກວດສອບ. ຜູ້ນຳໃຊ້ COM ສາມາດຊອກຫາຜົນໄດ້ຮັບ ແລະ ເຫດການ ສະເພາະຕໍ່ຜູ້ນຳໃຊ້, ປະເທດ, ວັນທີທີ່ອອກຈາກ/ທີ່ເຂົ້າຫາ ແລະ ອື່ນໆ, ດັ່ງນັ້ນ ຜົນໄດ້ຮັບທີ່ກ່ຽວຂ້ອງ ຈະປະກົດ ຂຶ້ນ ໂດຍນຳໃຊ້ເງື່ອນໄຂທີ່ຕ້ອງການ ແລະ ການສົ່ງແບບຟອມການຄົ້ນຫາ. ຜູ້ນຳໃຊ້ COM ຖືວ່າເປັນ "ຜູ້ບໍລິຫານ ລະບົບຂອງ EU".

## 3.3 ຜູ້ບໍລິຫານພາຍໃນຂອງອົງການທີ່ມີສິດອຳນາດ (CA) ຂອງ BC

ຜູ້ທີ່ເປັນຜູ້ບໍລິຫານພາຍໃນຂອງ CA ຂອງ BC ແມ່ນສະມາຊິກທີ່ຍັງເຄື່ອນໄຫວຢູ່ຂອງອົງການທີ່ມີສິດອຳນາດ ຂອງ BC, ທີ່ຄຸ້ມຄອງຜູ້ນຳໃຊ້ພາຍໃນຂອງ CA ແລະ ຍັງປ້ອນຂໍ້ມູນເຂົ້າໃນ REX ໃຫ້ແກ່ CA ທີ່ກ່ຽວຂ້ອງ.

ບົດບາດນີ້ແມ່ນມີຄວາມສຳຄັນຫຼາຍ ເພາະວ່າ ມັນຈະເປັນຜູ້ປະສານງານ ລະຫວ່າງ COM ແລະ BC ທີ່ກ່ຽວຂ້ອງ. ເພື່ອໃຫ້ໄດ້ສິດໃນການເຂົ້າເຖິງຂອງຜູ້ບໍລິຫານ ຜູ້ນຳໃຊ້ ຄວນຜ່ານການຝຶກອົບຮົມ ທີ່ຈັດໂດຍ TAXUD.

ຜູ້ບໍລິຫານພາຍໃນຂອງ BC ຈະຮັບຜິດຊອບຕໍ່ການນຳໃຊ້ລະບົບທີ່ຖືກຕ້ອງ ໂດຍຜູ້ນຳໃຊ້ພາຍໃນປະເທດ ແລະ ການປ້ອນຂໍ້ມູນທີ່ຖືກຕ້ອງດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢູ່ໃນໂປຼແກຼມ. ການນຳໃຊ້ລະບົບແບບບໍ່ເໝາະສົມ ຫຼື ການປ້ອນຂໍ້ມູນເຂົ້າທີ່ບໍ່ຖືກຕ້ອງ ສາມາດເຮັດໃຫ້ມີການແຍກ BCs ອອກຈາກລະບົບ REX.




**ຮູບ 3-1: ຜູ້ມີສ່ວນກ່ຽວຂ້ອງ/ຜູ້ບໍລິຫານພາຍໃນປະເທດຂອງ BC**

## 3.4 ຜູ້ນຳໃຊ້ພາຍໃນ CA ຂອງ BC

ຜູ້ມີສ່ວນກ່ຽວຂ້ອງດັ່ງກ່າວນີ້ ເປັນສະມາຊິກທີ່ສຳຄັນຂອງ CA ຂອງ BC ຊຶ່ງຮັບຜິດຊອບການຂຶ້ນທະບຽນ ຜູ້ສົ່ງອອກຂອງ BC ເຂົ້າໃນໂປຼແກຼມ REX ທີ່ຕົ້ນຕໍ. ຜູ້ນຳໃຊ້ພາຍໃນ CA ຂອງ BC ສາມາດ

ເຂົ້າເຖິງໂປຼແກຼມ REX ໂດຍຜ່ານ ECAS ແລະ ເຂົ້າເຖິງໜ້າທີ່ຂອງລະບົບ ທີ່ກຳນົດຢູ່ໃນຕາຕະລາງ ຂ້າງລຸ່ມ: :




**ຮູບ 3-2: ຜູ້ມີສ່ວນກ່ຽວຂ້ອງ/ຜູ້ນຳໃຊ້ຢູ່ພາຍໃນ CA ຂອງ BC**

## 3.5 ຜູ້ສົ່ງອອກ/ຜູ້ເຄື່ອນໄຫວເສດຖະກິດ

ບຸກຄົນດັ່ງກ່າວ ໝາຍເຖິງ ຜູ້ສົ່ງອອກທັງໝົດຂອງ BC ແລະ ການຕິດຕໍ່ສື່ສານຂອງພວກເຂົາກັບລະບົບ REX




**ຮູບ 3-3: ຜູ້ມີສ່ວນກ່ຽວຂ້ອງ/ຜູ້ສົ່ງອອກ**

## 3.6 ຜູ້ນຳໃຊ້ທົ່ວໄປ

ຜູ້ມີສ່ວນກ່ຽວຂ້ອງດັ່ງກ່າວນີ້ ໝາຍເຖິງ ຜູ້ນຳໃຊ້ທົ່ວໄປ ຊຶ່ງສາມາດນຳໃຊ້ຂໍ້ມູນ REX ແບບທົ່ວໄປ ໂດຍຜ່ານ ເວັບໄຊຂອງ EUROPA.




**ຮູບ 3-4: ຜູ້ມີສ່ວນກ່ຽວຂ້ອງ/ຜູ້ນຳໃຊ້ທົ່ວໄປ**

# 4 ຂະບວນການດຳເນີນງານຂອງ REX

## 4.1 ຂະບວນການຂອງໂປຼແກຼມ REX




ຮູບ 4-1: ຂະບວນການຂອງໂປຼແກຼມ REX

ຜູ້ສະໝັກຂໍນຳໃຊ້ REX ແມ່ນຜູ້ສົ່ງອອກຂອງ BC ທີ່ຢາກຂໍເລກ REX. ເລກ REX ແມ່ນມີຄວາມຈຳເປັນ ເພື່ອໃຫ້ໄດ້ການປະຕິບັດສິດທິພິເສດທາງພາສີ ພາຍໃຕ້ GSP.

ຂະບວນການສະເໜີກ ສາມາດດຳເນີນດ້ວຍສອງວິທີ ຄື:

I. ຜູ້ສົ່ງອອກ ສະໝັກໂດຍການປະກອບຂໍ້ມູນໃສ່ແບບຟອມໃບຄຳຮ້ອງຂໍ REX (ແບບເປັນເຈ້ຍ) ແລະ ຍື່ນໃຫ້ແກ່ອົງການທີ່ມີສິດອຳນາດທີ່ຖືກມອບໝາຍຂອງລັດຖະບານ;

II. ເມື່ອປະກອບຂໍ້ມູນໃສ່ແລ້ວ ແບບຟອມ AREX ມີຢູ່ໃນເວັບໄຊສາທາລະນະຂອງຄະນະກຳມາ ທິການເອີລົບ.

ຈາກນັ້ນ ຜູ້ສົ່ງອອກ (ຫຼື ຜູ້ຄອບຄອງສິນຄ້າໃນກໍລະນີຂອງສິນຄ້າທີ່ຖືກຂົນສົ່ງ) ສາມາດສົ່ງແຟ້ມການຂຶ້ນທະບຽນ ທາງເອເລັກໂຕຣນິກໃຫ້ແກ່ອົງການທີ່ມີສິດອຳນາດ ພ້ອມດ້ວຍແບບຟອມ AREX ແບບເປັນເຈ້ຍທີ່ມີການລົງ ລາຍເຊັນ.

ອົງການທີ່ມີສິດອຳນາດດຳເນີນການກວດສອບ AREX ທີ່ຈຳເປັນທັງໝົດ ແລະ ພ້ອມທັງຮັບເອົາ ຫຼື ສົ່ງຄືນ.

ສຳລັບ AREX ທີ່ຖືກຮັບເອົາແລ້ວ ອົງການທີ່ມີສິດອຳນາດປ້ອນຂໍ້ມູນ ແລະ ອອກເລກ REX, ວັນເດືອນປີຂຶ້ນທະ ບຽນ ແລະ ວັນເດືອນປີມີຜົນສັກສິດ.

ສຳລັບຜູ້ສົ່ງອອກທັງໝົດ ການສະແດງເລກປະຈຳຕົວຜູ້ສົ່ງອອກ (TIN) ແມ່ນແບບບັງຄັບ.

AREX ມີການຢືນຢັນຄວາມຖືກຕ້ອງ ໂດຍອີງໃສ່ເງື່ອນໄຂທີ່ກຳນົດ ແລະ ຄວາມຄົບຖ້ວນ ແລະ ຖືກເກັບຮັກສາ, ຖ້າມີ.

ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ຈະໄດ້ຮັບແຈ້ງກ່ຽວກັບການຂຶ້ນທະບຽນຂອງຕົນຢູ່ໃນ REX. ມັນຂຶ້ນຢູ່ກັບ ວ່າ ມີການອະນຸຍາດ ຫຼືບໍ່, ເລກ REX ແລະ (ສ່ວນໜຶ່ງຂອງ) ຂໍ້ມູນຂອງ REX ຖືກພິມເຜີຍແຜ່ລົງໃນອິນເຕີເນັດ

**<u>ຕົວຢ່າງ1</u>**

……

4.1.1 ກ່ອນໜ້າການຍື່ນຄຳຮ້ອງຂອງ REX

REX pre-application ຈະອອກໃຫ້ສະເພາະແຕ່ **<u>ຜູ້ສົ່ງອອກຂອງ BC</u>** ເທົ່ານັ້ນ ໃນຖານະທີ່ເປັນເວັບໄຊສະໜັບສະໜູນ, ຊຶ່ງແຍກ ອອກຈາກຄຳຮ້ອງຂອງ REX ຕ່າງຫາກ. ນີ້ຈະເຮັດໃຫ້ຜູ້ສົ່ງອອກສາມາດຂຶ້ນທະບຽນດ້ວຍຕົນເອງ, ການແຈ້ງ ໃຫ້ອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງຊາບກ່ຽວກັບສະຖານະພາບຂອງຕົນ ແລະ ການລະບຸຄວາມສົນໃຈຂອງຕົນ ເພື່ອຈະໃຫ້ມີການຮັບຮູ້ວ່າເປັນຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ.

ຄວນຈະມີການເນັ້ນວ່າ ບໍ່ມີຜູ້ນຳໃຊ້ REX ຄົນໃດ (ຂອງ BC/MS/CH/NO/COM) ຈະນຳໃຊ້ REX pre-application UI.

ຜູ້ສົ່ງອອກຂອງ BC ຈະຕ້ອງໄດ້ປ້ອນຂໍ້ມູນ ກ່ຽວກັບຄຸນລັກສະນະ ດັ່ງຕໍ່ໄປນີ້:

- ຂໍ້ມູນກ່ຽວກັບຜູ້ສົ່ງອອກ;
- ຂໍ້ມູນກ່ຽວກັບບຸກຄົນທີ່ເປັນຜູ້ຕິດຕໍ່ຂອງຜູ້ສົ່ງອອກ;
- ກິດຈະກຳຂອງຜູ້ສົ່ງອອກ;
- ລາຍລະອຽດກ່ຽວກັບສິນຄ້າຂອງຜູ້ສົ່ງອອກ;
- ກິດຈະການຂອງຜູ້ສົ່ງອອກ;
- ການອະນຸຍາດໃຫ້ພິມເຜີຍແຜ່.

**<u>ຕົວຢ່າງ 2</u>**

ຜູ້ເຄື່ອນໄຫວເສດຖະກິດ X ສ້າງຕັ້ງຢູ່ Y ຂອງ BC ແລະ ຢາກສົ່ງສິນຄ້າທີ່ຢູ່ໃນລັດສະມາຊິກ Z ໄປຕ່າງປະເທດ.

ຜູ້ສົ່ງອອກຂອງ BC ຈະເຊື່ອມຕໍ່ເວັບໄຊກ່ອນການສະໝັກ (Pre-Application Web site) ແລະ ຈະປ້ອນຂໍ້ມູນທີ່ຈຳເປັນທັງໝົດໃສ່ແບບຟອມ AREX.

## 4.2 ການດັດແກ້ຂະບວນການຂໍ້ມູນຂອງ REX




ຮູບ 4-2: ຂະບວນການດັດແກ້ຂໍ້ມູນຂອງ REX

ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ, ແມ່ນ ຜູ້ສົ່ງອອກ (ຫຼື ຜູ້ຄອບຄອງສິນຄ້າສຳລັບກໍລະນີມີການປ່ຽນແປງຂໍ້ກຳ ນົດຢູ່ໃນໃບນຳສົ່ງສິນຄ້າ) ທີ່ມີເລກ REX ຢູ່ແລ້ວ.

ການມີເລກ REX ດັ່ງກ່າວນີ້, ເຮັດໃຫ້ຜູ້ກ່ຽວມີສິດໄດ້ຮັບການປະຕິບັດສິດທິພິເສດທາງພາສີ ພາຍໃຕ້ GSP.

ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ຍື່ນຄຳຮ້ອງເພື່ອຂໍດັດແກ້ຂໍ້ມູນຂອງຜູ້ກ່ຽວ ເພາະວ່າ ຜູ້ກ່ຽວຕ້ອງການປ່ຽນແປງ ຂໍ້ມູນຢູ່ໃນ REX.

ພາຍຫຼັງໄດ້ຮັບຄຳຮ້ອງແລ້ວ ອົງການທີ່ມີສິດອຳນາດ ດຳເນີນການກວດສອບທີ່ຈຳເປັນທັງໝົດ ແລະ ຮັບເອົາ ຫຼື ສົ່ງຄຳຮ້ອງນັ້ນຄືນ.

ສຳລັບ **ຄຳຮ້ອງຂໍດັດແກ້ທີ່ຖືກຮັບເອົາແລ້ວ** ອົງການທີ່ມີສິດອຳນາດຕ້ອງດັດແກ້ຂໍ້ມູນ ແລະ ແຈ້ງໃຫ້ຜູ້ສົ່ງ ອອກຮັບຊາບ ກ່ຽວກັບການດັດແກ້ຂໍ້ມູນຂອງ REX ພາຍຫຼັງຂໍ້ມູນທີ່ຖືກດັດແກ້ໄດ້ຖືກບັນທຶກ/ເກັບມ້ຽນແລ້ວ. ມັນຂຶ້ນຢູ່ກັບວ່າ ມີການອະນຸຍາດແລ້ວຫຼືບໍ່, ເລກ REX ແລະ (ສ່ວນໜຶ່ງຂອງ) ຂໍ້ມູນຂອງ REX ຖືກພິມເຜີຍ ແຜ່ລົງໃນອິນເຕີເນັດ.

ຂໍ້ມູນດັ່ງຕໍ່ໄປນີ້ ແມ່ນສາມາດດັດແກ້ໄດ້:

- ຊື່ ແລະ ນາມສະກຸນ ຜູ້ສົ່ງອອກ;

- ທີ່ຢູ່ຂອງຜູ້ສົ່ງອອກ;

- ຂໍ້ມູນກ່ຽວກັບການຕິດຕໍ່;

- ກິດຈະການຕົ້ນຕໍ: ຜູ້ຜະລິດ ຫຼື ຜູ້ສົ່ງອອກ;

- ກິດຈະກຳຕ່າງໆ;

- ລາຍລະອຽດກ່ຽວກັບຂະບວນການດ້ານອຸດສາຫະກຳ;

- ລາຍລະອຽດກ່ຽວກັບສິນຄ້າ;

- ສະຖານະພາບຂອງການອະນຸຍາດ;

ລະບົບ REX ຕ້ອງມີການກຳນົດກົນໄກທີ່ສອດຄ່ອງຕາມນິຕິກຳ ທີ່ເຮັດໃຫ້ສາມາດແກ້ໄຂສະຖານະການ ຢູ່ບ່ອນ ທີ່ມີການຍື່ນຄຳຮ້ອງ ເຖິງວ່າ ມີການນຳໃຊ້ເລກ REX ຫຼື ເລກ TIN ຫຼື ເລກ EORI ຜິດກໍ່ຕາມ (ບໍ່ວ່າຈະເປັນ ຍ້ອນຄວາມຜິດພາດຂອງຜູ້ສົ່ງອອກ ຫຼື ຍ້ອນຄວາມຜິດພາດຂອງອົງການທີ່ມີສິດອຳນາດ).

**ຕົວຢ່າງ**

…….

## 4.3 ການຍົກເລີກຂະບວນການຂຶ້ນທະບຽນ REX

### *4.3.1 ການຍົກເລີກ REX*

ການຍົກເລີກ ສາມາດເກີດຂຶ້ນໂດຍອີງໃສ່ການຮ້ອງຂໍຂອງຜູ້ສົ່ງອອກ (ຫຼື ຜູ້ຄອບຄອງສິນຄ້າ ໃນກໍລະນີການປ່ຽນ ຂໍ້ກໍານົດໃໝ່ໃນໃບນໍາສົ່ງສິນຄ້າ) ຫຼື ການລິເລີ່ມຂອງອົງການທີ່ມີສິດອໍານາດ. ເຫດຜົນສໍາລັບການຍົກເລີກມີ ດັ່ງນີ້:

- ຄໍາຮ້ອງຂອງຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ເພາະວ່າ ພວກເຂົາປະຕິບັດບໍ່ໄດ້ຕາມເງື່ອນໄຂການສົ່ງອອກ ສິນຄ້າພາຍໃຕ້ໂຄງການດັ່ງກ່າວ ອີກຕໍ່ໄປ ຫຼື ບໍ່ເຈຕະນາສົ່ງອອກສິນຄ້າຕໍ່ໄປອີກ;

- ຄໍາຕົກລົງຂອງອົງການມີສິດອໍານາດ: ບໍລິສັດ ບໍ່ມີຕົວຕົນອີກຕໍ່ໄປ; ບໍລິສັດ ບໍ່ສາມາດປະຕິບັດພັນທະຂອງຕົນ; ຫຼື ບໍລິສັດມີການສໍ້ໂກງ.

ພຽງແຕ່ຜູ້ນໍາໃຊ້ຂອງອົງການທີ່ມີສິດອໍານາດ ທີ່ມີສິດໃນການເຂົ້າເຖິງໂດຍໄດ້ຮັບອະນຸຍາດເທົ່ານັ້ນ ທີ່ມີສິດຍົກເລີກ ການຂຶ້ນທະບຽນຂອງປະເທດຕົນ. ການຍົກເລີກການຂຶ້ນທະບຽນຂອງຜູ້ສົ່ງອອກ ແມ່ນດໍາເນີນສໍາລັບນິຕິບຸກຄົນທັງ ໝົດ (NO, CH ແລະ EU).

ວັນເດືອນປີການຍົກເລີກ ດັ່ງທີ່ອົງການທີ່ມີສິດອໍານາດກໍານົດ ຕ້ອງຖືກບັນທຶກຢູ່ໃນ REX. ວັນເດືອນປີການຍົກ ເລີກ ແມ່ນກໍານົດໂດຍ NA ແລະ ບໍ່ສາມາດມີຜົນຍ້ອນຫຼັງ. ໃນກໍລະນີທີ່ມີການຍົກເລີກ, ແມ່ນບໍ່ສາມາດເອົາເລກ REX ໃຫ້ຜູ້ເຄື່ອນໄຫວເສດຖະກິດອື່ນໄດ້.

ຈະມີການແຈ້ງໃຫ້ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນຊາບກ່ຽວກັບການຍົກເລີກ ແລະ ຂໍ້ມູນຈະຖືກເກັບ/ບັນທຶກ ໄວ້ ພາຍໃນກໍານົດເວລາທີ່ຈໍາເປັນ. BC ແລະ MS ບໍ່ໄດ້ຮັບອະນຸຍາດໃຫ້ລຶບຂໍ້ມູນ ກ່ອນຈະຄົບກໍານົດເວລາ ດັ່ງກ່າວ.

**<u>ຕົວຢ່າງ</u>**

……..

### *4.3.2 ການຍົກເລີກຜູ້ສົ່ງອອກທັງໝົດສະເພາະບາງປະເທດ*

COM/NO/CH ຕ້ອງສາມາດຖອນ ຫຼື ໂຈະປະເທດໃດປະເທດໜຶ່ງ ອອກຈາກບັນຊີລາຍຊື່ປະເທດ BC ຂອງໂຄງ ການ GSP ຂອງຕົນ.

ເນື່ອງຈາກການຖອນ/ການໂຈະປະເທດດັ່ງກ່າວ ລະບົບ REX ຕ້ອງຖອນຜູ້ສົ່ງອອກທີ່ໄດ້ຂຶ້ນທະບຽນທັງໝົດ (ຫຼື ຜູ້ຄອບຄອງສິນຄ້າໃນກໍລະນີຂອງການປ່ຽນຂໍ້ກໍານົດໃໝ່ໃນໃບນໍາສົ່ງສິນຄ້າ) ສໍາລັບນິຕິບຸກຄົນ, ເຖິງວ່າ ຜູ້ສົ່ງອອກເຫຼົ່ານັ້ນ ຍັງຄົງມີສິດສໍາລັບນິຕິບຸກຄົນອື່ນໆກໍ່ຕາມ.

ຂໍ້ມູນກ່ຽວກັບຜູ້ສົ່ງອອກເຫຼົ່ານີ້ ຈະຖືກເກັບ/ບັນທຶກໄວ້ ເປັນເວລາ 10 ປີປະຕິທິນ.

ລະບົບດັ່ງກ່າວຕ້ອງລຶບລາຍຊື່ຜູ້ສົ່ງອອກທີ່ຖືກໂຈະນັ້ນອອກໂດຍອັດຕະໂນມັດ ຫຼັງຈາກຄົບກໍານົດໄລຍະການເກັບ ຮັກສາຂໍ້ມູນໝົດ ພາຍໃຕ້ເງື່ອນໄຂທີ່ວ່າ ຂໍ້ມູນດັ່ງກ່າວຕ້ອງບໍ່ຖືກນິຕິບຸກຄົນອື່ນນໍາໃຊ້ຢູ່ພາຍໃນຂອບຂອງໂຄງການ GSP ຂອງນິຕິບຸກຄົນດັ່ງກ່າວ.

ຕ້ອງໄດ້ສ້າງບົດລາຍງານ ພ້ອມດ້ວຍບັນຊີລາຍຊື່ຜູ້ສົ່ງອອກທີ່ຖືກລຶບອອກຈາກລະບົບ. ແຕ່ວ່າ ພາຍຫຼັງລຶບອອກ ແລ້ວ, ລະບົບຕ້ອງຮັກສາສໍາເນົາເລກ REX ທີ່ຖືກລຶບໄປນັ້ນ ແລະ ໄລຍະການມີຜົນສັກສິດຂອງມັນໄວ້.

**<u>ຕົວຢ່າງ</u>**

### 4.4 ການປະກາດການເປັນໂມຄະຂອງການຍົກເລີກຂະບວນການຂຶ້ນທະບຽນ REX




ຮູບ 4-3: ການປະກາດການເປັນໂມຄະຂອງການຍົກເລີກຂະບວນການນໍາໃຊ້ REX

ການປະກາດການເປັນໂມຄະຂອງການຍົກເລີກຜູ້ສົ່ງອອກ ສາມາດເກີດຂຶ້ນໄດ້ ຖ້າຫາກການອຸທອນຕັດສິນໃຫ້ ຜູ້ສົ່ງອອກເປັນຝ່າຍຊະນະ. ຮູບແບບຂອງການລິເລີ່ມການປະກາດການເປັນໂມຄະດັ່ງກ່າວຈະຂຶ້ນກັບເງື່ອນໄຂ ດ້ານກົດໝາຍຢູ່ປະເທດທີ່ໄດ້ຮັບປະໂຫຍດ ຫຼື ລັດສະມາຊິກ.

ການປະກາດການເປັນໂມຄະຂອງການຍົກເລີກຜູ້ສົ່ງອອກ (ຫຼື ຜູ້ຄອບຄອງສິນຄ້າໃນກໍລະນີຂອງການປ່ຽນຂໍ້ກຳນົດ ໃໝ່ໃນໃບນຳສົ່ງສິນຄ້າ) ສາມາດເກີດຂຶ້ນ ໃນກໍລະນີທີ່ການອຸທອນຕັດສິນໃຫ້ຜູ້ສົ່ງອອກຊະນະ ຫຼື ໃນກໍລະນີ ການຍົກເລີກແບບສະໝັກໃຈ. ມີພຽງແຕ່ຜູ້ນຳໃຊ້ຢູ່ໃນອົງການທີ່ມີສິດອຳນາດ ທີ່ໄດ້ຮັບສິດໃນການເຂົ້າເຖິງເທົ່າ ນັ້ນ ທີ່ມີສິດປະກາດການເປັນໂມຄະການຍົກເລີກການຂຶ້ນທະບຽນຂອງຜູ້ສົ່ງອອກ.

ການປະກາດການເປັນໂມຄະຂອງການຍົກເລີກການຂຶ້ນທະບຽນຂອງຜູ້ສົ່ງອອກ ແມ່ນດຳເນີນສຳລັບນິຕິບຸກຄົນທັງ ໝົດ (NO, CH ແລະ EU).

ກໍລະນີ ຂໍ້ມູນຂອງຜູ້ສົ່ງອອກຫາກບໍ່ມີຢູ່ໃນລະບົບອີກຕໍ່ໄປ, ຜູ້ສົ່ງອອກອາດຈຳເປັນຕ້ອງຍື່ນຄຳຮ້ອງຂໍຂຶ້ນທະບຽນ ໃໝ່ ແລະ ສາມາດນຳໃຊ້ເລກ REX ດຽວກັນນີ້ຄືນໃໝ່.

ເມື່ອການປະກາດການເປັນໂມຄະຂອງການຍົກເລີກສຳເລັດລົງແລ້ວ, ອົງການທີ່ມີສິດອຳນາດທີ່ຮັບຜິດຊອບ ຕ້ອງ ແຈ້ງໃຫ້ຜູ້ສົ່ງອອກຮັບຊາບກ່ຽວກັບການຂຶ້ນທະບຽນຄືນໃໝ່ຂອງຜູ້ກ່ຽວ. ວັນມີຜົນສັກສິດຈະຖືກປັບປຸງ ແລະ ພິມເຜີຍແຜ່ລົງໃນອິນເຕີເນັດ.

ແຈ້ງການກ່ຽວກັບການປະກາດການເປັນໂມຄະຂອງການຍົກເລີກ (ຊຶ່ງບັນຈຸຂໍ້ມູນຂອງຜູ້ສົ່ງອອກ ແລະ ວັນສິ້ນສຸດ ການມີຜົນສັກສິດ) ຕ້ອງໃຫ້ມີຢູ່ໃນລະບົບ. ຜູ້ນຳໃຊ້ຂອງ CA ຕ້ອງສາມາດພິມ ແລະ ບັນທຶກແຈ້ງການກ່ຽວກັບ ການປະກາດການເປັນໂມຄະຂອງການຍົກເລີກການຂຶ້ນທະບຽນ.

CA ທີ່ຮັບຜິດຊອບ ຕ້ອງແຈ້ງໃຫ້ຜູ້ສົ່ງອອກຊາບກ່ຽວກັບການປະກາດການເປັນໂມຄະຂອງການຍົກເລີກໂດຍຜ່ານ ທາງເອເລັກໂຕຣນິກ ຫຼື ແບບເປັນເຈ້ຍ.

**ຕົວຢ່າງ**

……

## 4.5 ເພີ່ມ/ ລວມຕົວຄືນໃໝ່/ ຖອນ/ ໂຈະ ຂະບວນການຂອງປະເທດ




ຮູບ 4-4: ເພີ່ມ/ລວມຕົວຄືນໃໝ່/ຖອນ/ໂຈະ ຂະບວນການຂອງປະເທດ

ກໍລະນີ ປະເທດປະເທດໃດໜຶ່ງ ຫາກຖືກເພີ່ມເຂົ້າໃນບັນຊີລາຍຊື່ຂອງປະເທດທີ່ໄດ້ຮັບປະໂຫຍດຈາກໂຄງການ GSP, ລະບົບ REX ຈະຂຶ້ນທະບຽນຜູ້ສົ່ງອອກທີ່ໄດ້ຂຶ້ນທະບຽນທັງໝົດ (ຫຼື ຜູ້ຄອບຄອງສິນຄ້າໃນກໍລະນີຂອງ ການປ່ຽນຂໍ້ກຳນົດໃໝ່ໃນໃບນຳສົ່ງສິນຄ້າ ) ຂອງປະເທດ ແບບອັດຕະໂນມັດ, ຖ້າປະເທດດັ່ງກ່າວ ຫາກມີຢູ່ໃນ ລະບົບຂອງນິຕິບຸກຄົນອື່ນແລ້ວ. ຖ້າບໍ່ດັ່ງນັ້ນ ກໍຕ້ອງໄດ້ຂຶ້ນທະບຽນໃໝ່.

ຖ້າປະເທດໃດໜຶ່ງຫາກຖືກລວມຕົວຄືນໃໝ່ເຂົ້າໃນບັນຊີຂອງປະເທດທີ່ໄດ້ຮັບປະໂຫຍດຈາກໂຄງການ GSP, ລະບົບ REX ຈະເຮັດໃຫ້ຜູ້ສົ່ງອອກທີ່ໄດ້ຂຶ້ນທະບຽນທັງໝົດ (ຫຼື ຜູ້ຄອບຄອງສິນຄ້າໃນກໍລະນີຂອງການປ່ຽນ ຂໍ້ກຳນົດໃໝ່ໃນໃບນຳສົ່ງສິນຄ້າ ) ຂອງປະເທດນັ້ນມີຜົນສັກສິດຄືນແບບອັດຕະໂນມັດ, ຖ້າຂໍ້ມູນຫາກຍັງມີ ຢູ່ໃນລະບົບຂອງນິຕິບຸກຄົນທີ່ກຳລັງລວມປະເທດເຂົ້າໃນລະບົບຄືນໃໝ່ ຫຼື ຖ້າປະເທດຫາກມີຢູ່ໃນນິຕິບຸກຄົນ ອື່ນແລ້ວ.

ຖ້າປະເທດໃດໜຶ່ງຫາກຖືກຖອນ/ໂຈະ ຈາກບັນຊີລາຍຊື່ປະເທດທີ່ໄດ້ຮັບປະໂຫຍດຈາກໂຄງການ GSP, ລະບົບ REX ຈະຍົກເລີກຜູ້ສົ່ງອອກທັງໝົດສຳລັບນິຕິບຸກຄົນດັ່ງກ່າວ.

ອົງການທີ່ມີສິດອຳນາດຈະໄດ້ຮັບແຈ້ງກ່ຽວກັບການຂຶ້ນທະບຽນ, ການມີຜົນສັກສິດຄືນໃໝ່ແບບອັດຕະໂນມັດ ຫຼື ການຍົກເລີກຜູ້ສົ່ງອອກທັງໝົດ ແລະ ວັນມີຜົນສັກສິດ ແລະ ຄວາມສາມາດນຳໃຊ້ໄດ້ຕໍ່ນິຕິບຸກຄົນໜຶ່ງ ຈະຖືກປັບ ປຸງ ແລະພິມເຜີຍແຜ່ລົງໃນອິນເຕີເນັດ.

**<u>ຕົວຢ່າງ</u>**

.......

## 4.6 ການນຳໃຊ້ REX ຢູ່ໃນການດຳເນີນການແຈ້ງພາສີ




ຮູບ 4-1: ການນຳໃຊ້ REX ຢູ່ໃນຂະບວນການຂຶ້ນທະບຽນ

ຜູ້ແຈ້ງພາສີ ຍື່ນເອກະສານແຈ້ງພາສີ ເພື່ອໃຫ້ປ່ອຍສິນຄ້າອອກສູ່ຂອດຈໍລະຈອນ ໂດຍມີຄຳຮ້ອງຂໍປະຕິບັດສິດທິ ພິເສດທາງພາສີ ພາຍໃຕ້ລະບົບສິດທິພິເສດທາງການຄ້າແບບທົ່ວໄປ (GSP). ຂະບວນການສະແດງໃຫ້ເຫັນການ ກວດສອບຄວາມຖືກຕ້ອງທີ່ຈຳເປັນ ຊຶ່ງຈຳເປັນຕ້ອງດຳເນີນໂດຍຫ້ອງການພາສີທີ່ມີສິດອຳນາດຢູ່ໃນ MS ຂອງ EU.

**<u>ຕົວຢ່າງ</u>**

.........

# 5 ລາຍລະອຽດຂອງລະບົບ REX ໃນລະດັບສູງ

## 5.1 ລາຍລະອຽດຂອງລະບົບ REX ທົ່ວໄປ

### *5.1.1 ໃຜມີສິດໄດ້ ເລກ REX?*

ນິຕິບຸກຄົນດັ່ງຕໍ່ໄປນີ້ ຈະມີສິດຮັບເລກ REX:

- ຜູ້ເຄື່ອນໄຫວເສດຖະກິດຂອງ BC ເປັນຕົ້ນ ຜູ້ສົ່ງອອກຂອງ BC;
- ຜູ້ເຄື່ອນໄຫວເສດຖະກິດຂອງ MS ທີ່ຮ່ວມມືກັບ BCs;
- ຜູ້ເຄື່ອນໄຫວເສດຖະກິດ CH/NO ທີ່ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງອື່ນໆຂອງ MS/BC
- ອື່ນໆ?

### *5.1.2 ອົງການທີ່ຮັບຜິດຊອບການຂຶ້ນທະບຽນ REX*

ອົງການດັ່ງຕໍ່ໄປນີ້ ຈະຮັບຜິດຊອບການຂຶ້ນທະບຽນ REX:

- ອົງການທີ່ມີສິດອຳນາດຂອງ COM;
- ອົງການທີ່ມີສິດອຳນາດຂອງ MS;
- ຜູ້ເຄື່ອນໄຫວເສດຖະກິດຂອງ BC ທີ່ຮ່ວມມືກັບ BCs;
- ຜູ້ເຄື່ອນໄຫວເສດຖະກິດຂອງ CH/NO ທີ່ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງອື່ນໆຂອງ MS/BC;
- ອື່ນໆ?

### *5.1.3 ໂຄງສ້າງຂອງເລກ REX*

ໃນເວລາຂຶ້ນທະບຽນຜູ້ສົ່ງອອກ, ອົງການທີ່ມີສິດອຳນາດຂອງປະເທດທີ່ໄດ້ຮັບປະໂຫຍດ ຫຼື ຂະແໜງພາສີ ຂອງລັດສະມາຊິກ ຈະມອບຕົວເລກສະເພາະ, ເລກ REX ໃຫ້ຜູ້ສົ່ງອອກ. ຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນ ທະບຽນຈະນຳໃຊ້ເລກ REX ຂອງຕົນໃສ່ໃນເອກະສານແຈ້ງແຫຼ່ງກຳເນີດທີ່ຕົນຈະອອກ. ເລກ REX ຈະປະກອບມີ ດັ່ງນີ້:

- ..35 format;

- ເລີ່ມຕົ້ນຈາກລະຫັດປະເທດໃນຕຳແໜ່ງທີ 2 ຂອງສາລະບານທາງດ້ານພູມສາດ ( geonomenclature)[1];
- ຖັດຈາກນັ້ນແມ່ນແຖວທີ່ບໍ່ປ່ຽນແປງຂອງ 'REX' ('REX' fixed string);
- ຈາກນັ້ນແມ່ນ ຕົວອັກສອນຕ່ຳສຸດ 1 ຕົວ ແລະ ສູງສຸດ 30 ຕົວ ທີ່ບໍ່ມີການຈັດລະບຽບ ແລະ ຈົ່ງໄວ້ສຳລັບ MSs ແລະ ສຳລັບ CH/NO BCs;
- ຈະນຳໃຊ້ ພຽງແຕ່ ເລກ 0..9 ຫຼື ຕົວພິມໃຫຍ່ ແຕ່ A..Z.

<u>ຕົວຢ່າງຣ ກ່ຽວກັບເລກ REX</u>

……….

*5.1.4 ນຳໃຊ້ເລກ REX*

ການທີ່ຈະມີສິດອອກໃບຢັ້ງຢືນແຫຼ່ງກຳເນີດສຳລັບຈຳນວນສິນຄ້າທີ່ສົ່ງໄປ ຊຶ່ງບັນຈຸຜະລິດຕະພັນທີ່ມີຕົ້ນກຳ ເນີດໃນມູນຄ່າເກີນ 6.000 euro, ກ່ອນອື່ນໝົດ ຜູ້ສົ່ງອອກຈຳເປັນຕ້ອງສະເໜີໃຫ້ຜູ້ສົ່ງອອກທີ່ໄດ້ຮັບ ການຂຶ້ນທະບຽນສົ່ງເລກ REX ໃຫ້ແກ່ອົງການທີ່ມີສິດອຳນາດຂອງປະເທດທີ່ໄດ້ຮັບປະໂຫຍດ ບ່ອນທີ່ຜູ້ ກ່ຽວສ້າງຕັ້ງຢູ່. ອີງຕາມ ມາດຕາ 69a ແລະ 92 ຂອງ CCIP, ດັ່ງທີ່ໄດ້ລະບຸໄວ້, ອົງການທີ່ມີສິດອຳນາດ ເຫຼົ່ານີ້ ຈຳເປັນຕ້ອງໄດ້ກວດສອບແບບຟອມໃບຄຳຮ້ອງທີ່ຜູ້ສົ່ງອອກໄດ້ຍື່ນມາ. ກໍລະນີທີ່ພິຈາລະນາວ່າ ຂໍ້ມູນ ທັງໝົດທີ່ຖືກສະໜອງໃຫ້ນັ້ນ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ກໍຈະຂຶ້ນທະບຽນຜູ້ສົ່ງອອກ ແລະ ຈະອອກເລກ REX ໃຫ້ແກ່ຜູ້ກ່ຽວ.

ເມື່ອອອກເລກ REX ໄປແລ້ວ, ຕົວເລກສະເພາະດັ່ງກ່າວນີ້ ຕ້ອງຖືກນຳໃຊ້ຢູ່ໃນ BCs/ MS ທັງໝົດ, ພາກສ່ວນປະສານງານ ສຳລັບອອກໃບຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ຈຳນວນສິນຄ້າທີ່ສົ່ງໄປ ຊຶ່ງບັນຈຸເອົາຜະ ລິດຕະພັນທີ່ມີຕົ້ນກຳເນີດຈາກບ່ອນນັ້ນ ສຳລັບມູນຄ່າເກີນ €6.000.

*5.1.5 ເລກປະຈຳຕົວການຄ້າ ປຽບທຽບກັບ ເລກ REX*

ຢູ່ໃນແບບຟອມໃບຄຳຮ້ອງຂໍຂຶ້ນທະບຽນ (ເອກະສານຊ້ອນທ້າຍ 13c ຂອງ CCIP, ດັ່ງທີ່ໄດ້ກຳນົດໄວ້), ຜູ້ສົ່ງອອກຢູ່ປະເທດທີ່ໄດ້ຮັບປະໂຫຍດ ຈຳເປັນຕ້ອງຊີ້ບອກເລກປະຈຳຕົວການຄ້າ (TIN) ຂອງຕົນ. ເລກ TIN ແມ່ນຕົວຊີ້ບອກ ທີ່ອະນຸຍາດໃຫ້ມີເລກປະຈຳຕົວສະເພາະສຳລັບຜູ້ສົ່ງອອກໃນລະດັບຊາດ. ມັນເປັນ ຄວາມຮັບຜິດຊອບຂອງອົງການທີ່ມີສິດອຳນາດຢູ່ປະເທດທີ່ໄດ້ຮັບ

[1] Commission Regulation (EC) No 2081/2003 of 27 November 2003 on the nomenclature of countries and territories for the external trade statistics of the Community and statistics of trade between Member States (Official Journal L 313 , 28/11/2003 P. 0011 – 0020)

ຜົນປະໂຫຍດ ໃນການອອກເລກ TIN ໃຫ້ແກ່ຜູ້ເຄື່ອນໄຫວເສດຖະກິດແຕ່ລະຄົນຢູ່ໃນປະເທດດັ່ງກ່າວ. EU ບໍ່ກ່ຽວຂ້ອງໃນຂະບວນການດັ່ງກ່າວນີ້. TIN ສາມາດນຳໃຊ້ທຽບເທົ່າກັບເລກຂອງ EORI (ເລກທະບຽນ ແລະ ເລກປະຈຳຕົວຂອງຜູ້ເຄື່ອນໄຫວ ເສດຖະກິດ) ທີ່ອອກໃຫ້ແກ່ຜູ້ເຄື່ອນໄຫວເສດຖະກິດຢູ່ EU.

ບໍ່ເໝືອນກັບເລກ TIN, ເລກ REX ບໍ່ຄວນເຮັດໃຫ້ເປັນແບບເລກປະຈຕຳຕົວ ແຕ່ເປັນເລກອະນຸຍາດ ຊຶ່ງ ເຮັດໃຫ້ຜູ້ສົ່ງອອກສາມາດພິສູດກ່ຽວກັບແຫຼ່ງກຳເນີດດ້ວຍຕົນເອງ.

ຖ້າຜູ້ສົ່ງອອກຫາກຖືກຍົກເລີກຈາກລະບົບຜູ້ສົ່ງອອກທີ່ໄດ້ຮັບການຂຶ້ນທະບຽນ ແລະ ຖ້າຜູ້ກ່ຽວຫາກໄດ້ຮັບ ການຂຶ້ນທະບຽນອີກຄັ້ງໜຶ່ງຕາມພາຍຫຼັງ, ຜູ້ກ່ຽວກໍ່ຈະໄດ້ຮັບເລກ REX ໃໝ່ ຊຶ່ງແຕກຕ່າງຈາກເລກ ທີ່ຜູ້ກ່ຽວໄດ້ຮັບໃນເບື້ອງຕົ້ນ. ແຕ່ວ່າ ຜູ້ສົ່ງອອກດັ່ງກ່າວຈະຮັກສາເລກ TIN ດຽວ.

*5.1.6 ຜົນປະໂຫຍດຂອງເລກ REX*

ເມື່ອມີການນຳໃຊ້ເລກ REX, ຜົນປະໂຫຍດກໍ່ຈະເກີດຂຶ້ນຫຼາຍຢ່າງ ຊຶ່ງເກີດຈາກຜົນໄດ້ຮັບທີ່ດີເລີດ ຂອງທຸກພາກສ່ວນ ຕົວຢ່າງ ເຊັ່ນ:

ດັ່ງນັ້ນ, ຂັ້ນຕອນຂອງພາສີ ທີ່ດຳເນີນໂດຍ CAs ຂອງ BCs (ທີ່ກ່ຽວຂ້ອງກັບຂັ້ນຕອນການສົ່ງອອກ) ຈະໄດ້ຮັບການປັບປຸງ ແລະ CAs ຈະມີປະສິດທິຜົນກວ່າເດີມ, ເຖິງວ່າ ພວກເຂົາຈະສາມາດດຳເນີນການຢ່າງ ວ່ອງໄວ ແລະ ຢ່າງມີປະສິດທິພາບສຳລັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (IT) ແລະ ເຕັກນິກການ ວິໄຈຄວາມສ່ຽງກໍ່ຕາມ. ນີ້ແມ່ນຍ້ອນ:

1) **ທຸກພາກສ່ວນ:** ໃບຢັ້ງຢືນແຫຼ່ງກຳເນີດ ທີ່ອອກໂດຍຜູ້ສົ່ງອອກໂດຍກົງ ຈະຮັບປະກັນວ່າການພິ ສູດກ່ຽວກັບແຫຼ່ງກຳເນີດ ແມ່ນຜູ້ທີ່ຢູ່ໃນຕຳແໜ່ງທີ່ຮູ້ຈັກແຫຼ່ງກຳເນີດຂອງສິນຄ້າດີທີ່ສຸດ ເປັນຜູ້ ອອກ. ດັ່ງນັ້ນ, ລະບົບຈະຮັບປະກັນທາງດ້ານການແບ່ງຄວາມຮັບຜິດຊອບທີ່ຈະແຈ້ງ ແລະ ເໝາະສົມ ແລະ ຜູ້ສົ່ງອອກ, ຜູ້ນຳເຂົ້າ ແລະ ອົງການຄຸ້ມຄອງ.

2) **CAs:** ພວກເຂົາຈະສາມາດສຸມໃສ່ການດຳເນີນການຕິດຕາມກວດກາ. ແຕ່ເຖິງຢ່າງໃດກໍ່ຕາມ, ເພື່ອດຳເນີນການຕິດຕາມກວດກາດັ່ງກ່າວຢ່າງມີປະສິດທິຜົນນັ້ນ, ພວກເຂົາຈຳເປັນຕ້ອງມີຂໍ້ມູນ ກ່ຽວກັບຜູ້ດຳເນີນທຸລະກິດທີ່ຕົນຄຸ້ມຄອງຢູ່. ການກຳນົດໃຫ້ຜູ້ສົ່ງອອກຂຶ້ນທະບຽນຢູ່ນຳ CAs – ເພື່ອເປັນເງື່ອນໄຂໃນການສາມາດສົ່ງອອກ ພາຍໃຕ້ຂໍ້ຕົກລົງ – ຈະຮັບປະກັນວ່າ CAs ມີຄວາມຮູ້ ພື້ນຖານທີ່ແນ່ນອນກ່ຽວກັບຜູ້ດຳເນີນທຸລະກິດ (ຊື່, ທີ່ຢູ່, ກິດຈະການ).

3) **ຜູ້ສົ່ງອອກ**: ຂະບວນການຂຶ້ນທະບຽນ ຈະເປັນເງື່ອນໄຂທີ່ຕ້ອງເຮັດພຽງຄັ້ງດຽວ ຫຼັງຈາກນັ້ນ ຜູ້ດຳ ເນີນທຸລະກິດຈະມີສິດອອກໃບຢັ້ງຢືນແຫຼ່ງກຳເນີດ ໂດຍບໍ່ຈຳເປັນຕ້ອງອາໄສ CAs ອີກຕໍ່ໄປ. ດັ່ງນັ້ນ, ການຂຶ້ນທະບຽນຜູ້ສົ່ງອອກ ຈະເປັນການສ້າງຄວາມກະທັດຮັດ

ງ່າຍດາຍໃຫ້ແກ່ຜູ້ສົ່ງອອກ. ນອກຈາກນັ້ນ, BCs ບໍ່ຈຳເປັນຕ້ອງສ້າງລະບົບໃໝ່ຂື້ນມາ ຍ້ອນວ່າ ຢູ່ BCs ຫຼາຍປະເທດ ຜູ້ດຳເນີນທຸລະກິດຖືກກຳນົດໃຫ້ຂື້ນທະບຽນຢູ່ນຳອົງການ ທີ່ມີສິດອຳນາດເພື່ອຈຸດປະສົງອື່ນໆຢູ່ແລ້ວ. ໃນກໍລະນີດັ່ງກ່າວ, ບັນດາອົງການທີ່ມີສິດ ອຳນາດ ຈະສາມາດນຳໃຊ້ໂຄງສ້າງການຂື້ນທະບຽນທີ່ມີຢູ່ ເພື່ອຈຸດປະສົງຂອງ REX. ນີ້ ສາມາດນຳໃຊ້ໄດ້ ແຕ່ວ່າ ຂໍ້ມູນທີ່ຈຳເປັນສຳລັບຈຸດປະສົງຂອງລະບຽບ ແຫຼ່ງກຳເນີດ ສິນຄ້າ ແມ່ນຈະໄດ້ຈາກລະບົບທີ່ມີຢູ່.

ນອກຈາກນັ້ນ, ການຈັດຕັ້ງປະຕິບັດ REX ຍັງຈະມີຜົນປະໂຫຍດຫຼາຍຢ່າງສຳລັບການປັບປຸງ ປະລິມານການ ຄ້າ ລະຫວ່າງ BCs ແລະ MS.

ສຳຄັນໄປກວ່ານັ້ນ:

- ຜູ້ສົ່ງອອກ ໄດ້ຮັບການຂື້ນທະບຽນຢູ່ນຳ CAs/NAs ຂອງ BCs ແລະ MS ທີ່ກ່ຽວຂ້ອງ;
- ການບັນທຶກທາງເອເລັກໂຕຣນິກກ່ຽວກັບຜູ້ສົ່ງອອກທີ່ຂື້ນທະບຽນ ແມ່ນມີຢູ່ໃນແຕ່ລະ BC ແລະ MS;
- ຖານຂໍ້ມູນກາງຂອງ REX ກ່ຽວກັບຜູ້ສົ່ງອອກທີ່ໄດ້ຂື້ນທະບຽນ ແມ່ນສ້າງໂດຍ COM ໂດຍອີງ ໃສ່ຂໍ້ມູນທີ່ມີການສື່ສານກັນໂດຍ CAs/NAs ຂອງ BCs ແລະ MS;
- ຜູ້ນຳເຂົ້າສາມາດກວດສອບເບິ່ງວ່າ ຜູ້ສົ່ງອອກສິນຄ້ານັ້ນ ໄດ້ຂື້ນທະບຽນກ່ອນໜ້າຍື່ນໃບ ແຈ້ງເສຍ ພາສີແລ້ວບໍ່;
- ສິ່ງອຳນວຍຄວາມສະດວກສຳລັບການສ້າງເວັບ (Web consultation facility) ແມ່ນ COM ເປັນຜູ້ສະໜອງໃຫ້ແກ່ຜູ້ສົ່ງອອກທີ່ໄດ້ຂື້ນທະບຽນທັງໝົດຢູ່ BCs ແລະ MS;
- ຄຸນນະພາບຂອງຂໍ້ມູນກ່ຽວກັບຜູ້ສົ່ງອອກທີ່ໄດ້ຮັບການຂື້ນທະບຽນ ໄດ້ຮັບການປັບປຸງໃຫ້ດີ ຂື້ນ;
- ການສໍ້ໂກງກໍ່ຫຼຸດລົງ ຍ້ອນມີການຕິດຕາມກວດກາການສົ່ງອອກ ແລະ ການນຳເຂົ້າຢູ່ແຫຼ່ງ ກຳເນີດ ທີ່ເຮັດໄດ້ດີຂື້ນ;
- ອັດຕາພາສີທີ່ໄດ້ຮັບສິດທິພິເສດ ຈະຖືກນຳໃຊ້ຢ່າງມີປະສິດທິຜົນ.
- ອື່ນໆ?

ນອກຈາກນັ້ນ, ການຈັດຕັ້ງປະຕິບັດ REX, ເນື່ອງຈາກວ່າມັນຈະສ້າງອົງປະກອບຈຳນວນໜຶ່ງ ສຳລັບສາທາ ລະນະຊົນ, ຈະສ້າງຄວາມເປັນໄປໄດ້ໃຫ້ແກ່ພົນລະເມືອງຂອງ EU ໃນການກວດ ສອບການມີ ແລະ ສະຖານະພາບໃນປະຈຸບັນຂອງຜູ້ສົ່ງອອກທີ່ໄດ້ຮັບການຂື້ນທະບຽນ, ເຖິງວ່າມັນ ຈະເຮັດໃຫ້ຂໍ້ມູນໄດ້ຮັບການ ປັບປຸງທີ່ດີຂື້ນກ່ຽວກັບຜົນປະໂຫຍດຂອງ BCs ຈາກສະຖານະ ພາບດ້ານ GSP ທີ່ກ່ຽວຂ້ອງກໍ່ຕາມ.

## 5.2 ການພິມເຜີຍແຜ່/ການທາບທາມຄຳເຫັນ

ຂໍ້ມູນ REX ຈະມີສຳລັບສາທາລະນະຊົນ ເຖິງວ່າຜູ້ນຳໃຊ້ຈະສາມາດນຳໃຊ້ຂໍ້ມູນຂອງ REX ຈາກ ເວັບໄຊ ຂອງສາທາລະນະກໍ່ຕາມ.

ຂໍ້ມູນຈຳນວນໜຶ່ງ ແມ່ນສາມາດເຂົ້າເຖິງໄດ້ຕະຫຼອດເວລາ, ເມື່ອສົມທຽບກັບຂໍ້ມູນຈຳນວນໜຶ່ງ ແມ່ນສາມາດ ເຂົ້າເຖິງໄດ້ໃນກໍລະນີທີ່ຜູ້ເຄື່ອນໄຫວເສດຖະກິດ (EO) ໄດ້ຍິນຍອມໂດຍການເຊັນ ໃສ່ ຫ້ອງ 6 ຂອງຄຳຮ້ອງ ຂໍເປັນຜູ້ສົ່ງອອກທີ່ຂຶ້ນທະບຽນ.

ຂໍ້ມູນຂອງ REX ຈະມີໄວ້ສຳລັບການນຳໃຊ້ມາດຖານການຄົ້ນຫາຕ່າງໆ ຊຶ່ງຜູ້ນຳໃຊ້ອາດຈະເລືອກ (ໜຶ່ງ ຫຼື ຫຼາຍ) ເພື່ອຕິດຕາມຂໍ້ມູນທີ່ຕ້ອງການ.

ມາດຖານທີ່ມີຢູ່ ມີດັ່ງຕໍ່ໄປນີ້:

- ເລກ REX;
- ຊື່ຜູ້ສົ່ງອອກ;
- ລະຫັດປະເທດ;
- ລະຫັດສິນຄ້າ (2 ຫຼື 4 ຕົວເລກ);
- ກິດຈະການຕົ້ນຕໍ: ຜູ້ຜະລິດ ຫຼື ການຄ້າ;
- ເລກ EORI (ສຳລັບຜູ້ສົ່ງອອກຂອງ EU);
- ເລກ TIN (ສຳລັບ NO/CH/ຜູ້ສົ່ງອອກຂອງ BCs);

ນອກຈາກນັ້ນ, ຜູ້ນຳໃຊ້ແຕ່ລະຄົນ ຈະມີສິ່ງອຳນວຍຄວາມສະດວກໃນການກວດສອບສະຖານະ ພາບຂອງ ເລກ REX ທີ່ໄດ້ອອກໃຫ້ ຢູ່ໃນເວັບໄຊ Europa.

ການຄົ້ນຫາຂໍ້ມູນ ໂດຍອີງໃສ່ເລກ REX ຈະນຳເອົາສະຖານະພາບຂອງເລກ REX ແລະ ຄວາມ ສາມາດໃນ ການນຳໃຊ້ຂອງມັນກັບ 3 ນິຕິບຸກຄົນ (EU, CH, NO) ແລະ ສາມາດ (ຖ້າຫາກ ອະນຸຍາດໂດຍຜູ້ສົ່ງອອກ) ໃນການສະແດງອີງປະກອບຂໍ້ມູນເພີ່ມເຕີມ.

ເວັບໄຊທົ່ວໄປ ຈະສະເໜີການເຊື່ອມຕໍ່ໃຫ້ແກ່ ໜ້າເວັບຂອງ NO/CH ທີ່ລະບຸລາຍຊື່ຜູ້ສົ່ງອອກ ຂອງ NO/CH (ຍ້ອນວ່າ ຜູ້ສົ່ງອອກເຫຼົ່ານີ້ ບໍ່ເປັນສ່ວນໜຶ່ງຂອງລະບົບ REX). ດັ່ງນັ້ນ, ຈະບໍ່ມີ ການສະໜອງຄຳ ສັ່ງຄົ້ນຫາຢູ່ໃນຂໍ້ມູນຂອງຜູ້ສົ່ງອອກຂອງ NO/CH.

# 6 ເອກະສານຊ້ອນທ້າຍ

## 6.1 ລາຍລະອຽດກ່ຽວກັບອົງການທີ່ມີສິດອຳນາດ

## 6.2 ບ່ອນອີງທາງດ້ານກົດໝາຍ

## 6.3 SLASLA

## 6.4 ວຽກງານສະໜັບສະໜູນ

### *6.4.1 ໂຕະບໍລິການແຫ່ງຊາດ ແລະ ສູນກາງ*

ໂຕະບໍລິການສູນກາງ (ITSM/SD) ເຮັດໜ້າທີ່ເປັນບ່ອນຕິດຕໍ່ຈຸດດຽວ ໂດຍສະເພາະຕິດຕໍ່ກັບໂຕະບໍລິການ ແຫ່ງຊາດເທົ່ານັ້ນ ຊຶ່ງມີການປະສານຢ່າງໃກ້ຊິດກັບໂຕະບໍລິການ CUST/DEV ແລະ ໂຕະບໍລິການ QA.

ສຳລັບຄຳຮ້ອງຂໍການສະໜັບສະໜູນ ລະຫວ່າງ ໂຕະບໍລິການແຫ່ງຊາດ ແລະ ໂຕະບໍລິການສູນກາງ, ຕະຫຼອດ ຮອດ ລະຫວ່າງ ໂຕະບໍລິການແຫ່ງຊາດສອງແຫ່ງ ຫຼື ຫຼາຍແຫ່ງ, ໂຕະບໍລິການແຫ່ງຊາດ ເຮັດໜ້າທີ່ເປັນ ຈຸດປະສານງານພຽງຈຸດດຽວກັບທີມງານໂຄງການແຫ່ງຊາດ.

ຄວນຈະເວົ້າວ່າ ທຸກຄຳຮ້ອງທີ່ສົ່ງໃຫ້ແກ່ໂຕະບໍລິການສູນກາງ ຄວນດຳເນີນພຽງແຕ່ໃນກໍລະນີທີ່ຫຼັງຈາກ ຄຳຮ້ອງຖືກດຳເນີນໄປແບບບໍ່ຜ່ານ ໂດຍໂຕະບໍລິການແຫ່ງຊາດທີ່ກ່ຽວຂ້ອງ.